# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ............................................... 1

II. ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ .................................................... 9


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ມັງກອນ 2025**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 30/12/2024, ສູນກາງພັກກອມມູນິດຫວຽດນາມ ໄດ້ປະກາດມະຕິຂອງກົມການເມືອງ ວ່າດ້ວຍພາລະບົດບາດ, ໜ້າທີ່, ຂອບເຂດສິດອຳນາດ, ໂຄງປະກອບການຈັດຕັ້ງ, ກົນໄກການປະສານ ລະຫວ່າງ 13 ຄະນະຂອງສູນກາງພັກ ຊຶ່ງປະກອບມີ: ຄະນະຈັດຕັ້ງສູນກາງ, ຄະນະກຳມະການກວດກາສູນກາງ, ຄະນະພາຍໃນສູນກາງພັກ, ສະຖາບັນການເມືອງແຫ່ງຊາດໂຮ່ຈິມິນ, ໜັງສືພິມປະຊາຊົນ, ວາລະສານກອມມູນິດ, ສຳນັກພິມຈຳໜ່າຍການເມືອງແຫ່ງຊາດ "ສິເຖິດ", ສູນກາງແນວໂຮມປະເທດຊາດຫວຽດນາມ, ສະຫະພັນແຮງງານຫວຽດນາມ, ສູນກາງຊາວໜຸ່ມກອມມູນິດໂຮ່ຈິມິນ, ສູນກາງສະຫະພັນແມ່ຍິງຫວຽດນາມ, ສະຫະພັນຊາວກະສິກອນຫວຽດນາມ, ສະຫະພັນນັກຮົບເກົ່າຫວຽດນາມ.

ວັນທີ 21/1/2025, ຄະນະຊີ້ນຳຂັ້ນສູນກາງ ໄດ້ປະຊຸມສະຫຼຸບຜົນການປະຕິບັດ ມະຕິເລກທີ 18-NQ/TW, ຄັ້ງທີ 2. ຜ່ານການຈັດຕັ້ງປະຕິບັດຜ່ານມາ ເຫັນວ່າ: ***ຢູ່ຂັ້ນສູນກາງ*** : ສາມາດຫຼຸດຈຳນວນອົງການຂັ້ນກົມ ໄດ້ 119 ຫົວໜ່ວຍ; ຄາດວ່າຈະຫຼຸດ 4 ອົງການພັກ; 25 ຄະນະບໍລິຫານງານພັກ, 16 ຄະນະພັກ (ຂົງເຂດ); 5 ກຳມາທິການຂອງສະພາແຫ່ງຊາດ; 5 ກະຊວງ, ອົງການທຽບເທົ່າກະຊວງ, 3 ອົງການທີ່ຂຶ້ນກັບລັດຖະບານ, 13 ກົມໃຫຍ່ - ການຈັດຕັ້ງທຽບເທົ່າ, 519 ກົມ (ນ້ອຍ) - ການຈັດຕັ້ງທຽບເທົ່າ, 219 ກົມ - ອົງການຈັດຕັ້ງທຽບເທົ່າ; 3,303 ຫົວໜ່ວຍທີ່ຂຶ້ນກັບ ກົມ (ນ້ອຍ) - ທຽບເທົ່າ; 203 ຫົວໜ່ວຍວິຊາສະເພາະທີ່ຂຶ້ນກັບລັດ; 227 ຂອດປະສານງານຂອງສານປະຊາຊົນຂັ້ນຕ່າງໆ; 108 ຂອດປະສານງານທີ່ຂຶ້ນກັບຂະແໜງການໄອຍະການປະຊາຊົນ. ***ຢູ່ຂັ້ນທ້ອງຖິ່ນ***: ຄາດວ່າຈະຫຼຸດ 66 ຄະນະພັກ ທີ່ຂຶ້ນກັບ ຄະນະພັກແຂວງ, ນະຄອນ ແລະ 264 ຫ້ອງການ ທີ່ເຮັດໜ້າທີ່ເສນາທິການ ແລະ ຊ່ວຍວຽກຄະນະພັກ; 63 ຫ້ອງການເສນາທິການ ແລະ ຊ່ວຍວຽກ ຄະນະພັກຂັ້ນແຂວງ; 644 ຄະນະພັກກຸ່ມ - ຂົງເຂດ ຂັ້ນແຂວງ; 694 ຫ້ອງການເສນາທິການ ແລະ ຊ່ວຍວຽກ ຄະນະພັກຂັ້ນເມືອງ; 340 ອົງການວິຊາສະເພາະທີ່ຂຶ້ນກັບ ຄະນະກຳມະການປະຊາຊົນຂັ້ນແຂວງ; 1,438 ອົງການວິຊາສະເພາະທີ່ຂຶ້ນກັບ ຄະນະກຳມະການຂັ້ນເມືອງ.

ວັນທີ 23-24/1/2025, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ດຳເນີນກອງປະຊຸມຄົບຄະນະ ສະໄໝສາມັນ ເທື່ອທີ 10 ຂອງຕົນ ໂດຍມີການປຶກສາຫາລື ***ວຽກງານບຸກຄະລາກອນຂອງພັກຈຳນວນໜຶ່ງຄື:*** ສູນກາງພັກກອມມູນິດຫວຽດນາມ ໄດ້ຕົກລົງເຫັນດີໃຫ້ ສະຫາຍ ເຈີນ ເກີມ ຕູ້, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ປະທານ ຄະນະກຳມະການກວດກາສູນກາງພັກ ຢຸດຕິການຮັບໜ້າທີ່ເປັນ ປະທານຄະນະກຳມະການກວດກາສູນກາງພັກ; ຕົກລົງແຕ່ງຕັ້ງ ສະຫາຍ ຫງວຽນ ຢຸຍ ຫງອກ, ເລຂາທິການສູນກາງພັກ, ເປັນປະທານຄະນະກຳມະການກວດກາສູນກາງພັກ, ພ້ອມທັງເລື່ອນເປັນກຳມະການກົມການເມືອງສູນກາງພັກ; ສະຫາຍ ເຈີນ ລິວກວາງ, ກຳມະການສູນກາງພັກ ເປັນຫົວໜ້າຄະນະເສດຖະກິດສູນກາງ ພ້ອມທັງເລື່ອນຂຶ້ນເປັນເລຂາທິການສູນກາງພັກ; ກອງປະຊຸມຍັງໄດ້ຮັບຟັງ ***ບົດສະຫຼຸບລາຍງານ:*** ການຈັດຕັ້ງປະຕິບັດ ມະຕິ ເລກທີ 18-NQ/TW, ວ່າດ້ວຍ ບາງບັນຫາທີ່ຈະສືບຕໍ່ ປ່ຽນແປງໃໝ່, ສັບຊ້ອນກົງຈັກການຈັດຕັ້ງຂອງລະບົບການເມືອງໃຫ້ກະທັດຮັດ, ເຄື່ອນໄຫວມີປະສິດພາບ ແລະ ປະສິດທິຜົນ; ບົດສຳຫຼວດການຊີ້ນຳ-ນຳພາຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ປະຈຳປີ 2024; ປະກອບຄຳເຫັນຕໍ່ການແຜນພັດທະນາເສດຖະກິດ-ສັງຄົມ ປີ 2025 ຊຶ່ງມີເປົ້າໝາຍເຮັດໃຫ້ການເຕີບໂຕເສດຖະກິດ ບັນລຸ 8% ຂຶ້ນໄປ; ບົດລາຍງານການຕີລາຄາການຈັດຕັ້ງປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມ 10 ປີ (2021-2030) ແລະ ທິດທາງການພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ດ້ວຍອັດຕາການເຕີບໂຕເສດຖະກິດ ບັນລຸ 2 ຕົວເລກ.

ວັນທີ 25/1/2025, ສະຫາຍ ຟາມ ມິງຈິງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມປະເມີນຜົນການປະຕິບັດໂຄງການສະໜາມບິນສາກົນລອງແທ່ງ (Long Thanh) ແລະ ໄດ້ຮຽກຮ້ອງໃຫ້ບັນດາອົງການທີ່ກ່ຽວຂ້ອງ ເພີ່ມທະວີຄວາມຮັບຜິດຊອບສູງ ເພື່ອຮັບປະກັນໃຫ້ໂຄງການດັ່ງກ່າວສຳເລັດໃນປີ 2025. ສະຫາຍ ເນັ້ນ

ໜັກວ່າ, ສະໜາມບິນສາກົນລອງແທ່ງ ແມ່ນໂຄງການສຳຄັນລະດັບຊາດ, ເປັນສະໜາມບິນໃຫຍ່ກວ່າໝູ່ຂອງຫວຽດນາມ, ຕ້ອງໄດ້ຮັບການປະຕິບັດຢ່າງຮີບດ່ວນ ເພື່ອບັນລຸການເຕີບໂຕດ້ານເສດຖະກິດ 2 ຕົວເລກ ໂຄງລ່າງຄົມມະນາຄົມຕ້ອງກ້າວໄປກ່ອນບາດກ້າວໜຶ່ງ. **ສະໜາມບິນສາກົນລອງແທ່ງ**: ເປັນສະໜາມບິນສາກົນ ທີ່ພວມກໍ່ສ້າງຢູ່ ເມືອງລອງແທ່ງ, ແຂວງດົງນາຍ, ຫວຽດນາມ, ຫ່າງຈາກ ນະຄອນໂຮ່ຈິມິນ ໄປທາງທິດຕາເວັນອອກ 40 ກິໂລແມັດ, ເລີ່ມການກໍ່ສ້າງ ໃນວັນທີ 5/1/2021. ພາຍຫຼັງສ້າງສຳເລັດສົມບູນ ຈະສາມາດບໍລິການຜູ້ໂດຍສານຫຼາຍກວ່າ 100 ລ້ານຄົນ ແລະ ຂົນສົ່ງສິນຄ້າ 5 ລ້ານໂຕນຕໍ່ປີ; ເປັນໂຄງການກໍ່ສ້າງພື້ນຖານໂຄງລ່າງທີ່ມູນຄ່າສູງເຖິງ 18,7 ຕື້ ໂດລາສະຫະລັດ ສູງທີ່ສຸດໃນປະຫວັດສາດຂອງຫວຽດນາມ, ຊຶ່ງຈະມີການພັດທະນາ 3 ໄລຍະ ຄື: ໄລຍະທີ 1 (2021-2026), ໄລຍະທີ 2 (2026-2035), ໄລຍະທີ 3 (2035 ເປັນຕົ້ນໄປ) ສຳລັບໄລຍະທີ 1: ມີມູນຄ່າ 7,8 ຕື້ໂດລາສະຫະລັດ ຄວາມສາມາດບັນຈຸຜູ້ໂດຍສານໄດ້ຫຼາຍກວ່າ 25 ລ້ານຄົນ ແລະ ສິນຄ້າ 1,2 ລ້ານໂຕນຕໍ່ປີ ສະໜາມບິນ ຈະເລີ່ມເປີດໃຫ້ບໍລິການໃນຕົ້ນປີ 2026 ເປັນຕົ້ນໄປ.

**2) ພັກກອມມູນິດຈີນ**

ວັນທີ 27/01/2025, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ກ່າວຄຳປາໄສ ໃນພິທີຕ້ອນຮັບບຸນປີໃໝ່ຈີນ 2025 ທີ່ ຫໍສະພາປະຊາຊົນ ມີບາງເນື້ອໃນບາງຕອນວ່າ: ໃນປີທີ່ຜ່ານມາ, ພວກເຮົາ ໄດ້ຊຸກຍູ້ການພັດທະນາຄຸນນະພາບສູງຢ່າງແຂງແຮງ, ປະຕິບັດນະໂຍບາຍຕ່າງໆ ທີ່ມີຢູ່ແລ້ວຢ່າງມີປະສິດທິຜົນ, ເພີ່ມທະວີຄວາມພະຍາຍາມ ເພື່ອຊຸກຍູ້ການຟື້ນຟູ ແລະ ປັບປຸງເສດຖະກິດ, ເຕັກໂນໂລຊີ ແລະ ນະວັດຕະກຳອຸດສາຫະກຳໄດ້ຮັບໝາກຜົນຢ່າງຕັ້ງໜ້າ, ກຳລັງການຜະລິດໄດ້ພັດທະນາຢ່າງບໍ່ຢຸດຢັ້ງ, ຕົວເມືອງ ແລະ ຊົນນະບົດ ໄດ້ຮັບການພັດທະນາໃນຮູບແບບໃໝ່. ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກກອມມູນິດຈີນ ຄັ້ງທີ 3 ສະໄໝທີ 20 ໄດ້ຊຸກຍູ້ການປະຕິຮູບຢ່າງຮອບດ້ານ ແລະ ເລິກເຊິ່ງກວ່າເກົ່າ ຮັບປະກັນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ມີວຽກເຮັດງານທຳ ສືບຕໍ່ເພີ່ມທະວີການນຳພາຂອງພັກທຸກຂົງເຂດຢ່າງໜັກແໜ້ນ ແລະ ເພີ່ມທະວີການຕ້ານການສໍ້ລາດບັງຫຼວງໃຫ້ເຂັ້ມແຂງ. ຈີນ ແມ່ນກົນໄກສຳຄັນຂອງການເຕີບໂຕທາງດ້ານເສດຖະກິດ ແລະ ການຮັກສາສະຖຽນລະພາບຂອງໂລກ, ຕັ້ງໜ້າຊຸກຍູ້ການຮັດແໜ້ນຄວາມສາມັກຄີ ແລະ ການຮ່ວມມືສາກົນ ເພື່ອການປົກປັກຮັກສາສັນຕິພາບຂອງໂລກ. ຈີນ ຍິນດີຮ່ວມກັບບັນດາປະເທດ ສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ; ຍຶດໝັ້ນການພັດທະນາໂດຍສັນຕິ, ການພັດທະນາແບບເປີດປະຕູສູ່ພາຍນອກ, ການພັດທະນາດ້ວຍການຮ່ວມມື ແລະ ການພັດທະນາແບບຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຢ່າງສະເໝີຕົ້ນສະເໝີປາຍ. ປັດຈຸບັນ, ມີ 155 ປະເທດໄດ້ເຂົ້າເປັນສະມາຊິກການຮ່ວມກັນສ້າງ “ໜຶ່ງແລວໜຶ່ງເສັ້ນທາງ”; ໄດ້ມີຫຼາຍສິບປະເທດ ແລະ ເຂດແຄວ້ນໄດ້ສ້າງຄູ່ຮ່ວມປະຊາຄົມຊາຕາກຳກັບຈີນ ດ້ວຍຮູບການຕ່າງໆ.

ວັນທີ 10-11/1/2025, ກອງປະຊຸມວຽກງານກວດສອບແຫ່ງຊາດ ໄດ້ໄຂຂຶ້ນທີ່ນະຄອນຫຼວງປັກກິ່ງ ສປ.ຈີນ ມີ 80 ອົງການກວດສອບ ແລະ 45 ນິຕິບຸກຄົນ ເຂົ້າຮ່ວມ. ໃນໂອກາດນີ້, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ເນັ້ນໜັກວ່າ ຕ້ອງສຸມໃສ່ວຽກງານຕົ້ນຕໍຂອງຕົນ, ລົງເລິກການປະຕິຮູບ ແລະ ການປະດິດສ້າງໃໝ່, ເພີ່ມທະວີການສ້າງຕົນເອງ, ພະຍາຍາມສ້າງລະບົບຕິດຕາມກວດກາດ້ານການເງິນ ແບບລວມສູນເປັນເອກະພາບກັນ, ທົ່ວເຖິງຮອບດ້ານ ແລະ ມີປະສິດທິຜົນສູງ ເພື່ອຮັບປະກັນການພັດທະນາ ທີ່ມີຄຸນນະພາບສູງຂອງເສດຖະກິດສັງຄົມ ເປັນການປະກອບສ່ວນອັນໃໝ່ ເຂົ້າໃນການຊຸກຍູ້ການສ້າງປະເທດໃຫ້ເຂັ້ມແຂງ ຢ່າງຮອບດ້ານດ້ວຍຄວາມທັນສະໄໝແບບຈີນ.

ວັນທີ 20/1/2025, ກອງປະຊຸມກົມການເມືອງສູນກາງພັກກອມມູນິດຈີນ ໄດ້ຄົ້ນຄວ້າພິຈາລະນາ ບົດລາຍງານສະພາບລວມ ກ່ຽວກັບ ຄະນະກຳມະການປະຈຳກົມການເມືອງສູນກາງພັກ, ຮັບຟັງ ແລະ ຄົ້ນຄວ້າບົດລາຍງານວຽກງານຈຸພັກ ຂອງຄະນະກຳມະການປະຈຳສະພາປະຊາຊົນແຫ່ງຊາດຈີນ, ຄະນະລັດຖະບານ, ສະພາທີ່ປຶກສາການເມືອງປະຊາຊົນແຫ່ງຊາດຈີນ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ບົດລາຍງານວຽກງານຂອງຄະນະເລຂາທິການສູນກາງພັກ ກໍຄືຄຳຊີ້ນຳ ວ່າດ້ວຍ ການຊຸກຍູ້ການອະນຸລັກສິ່ງແວດລ້ອມທຳມະຊາດ ແລະ ການພັດທະນາທີ່ມີຄຸນນະພາບ ຢູ່ເຂດລ່ອງແມ່ນ້ຳເຫຼືອງຢ່າງຮອບດ້ານ. ຕອນບ່າຍຂອງວັນດຽວກັນ, ທີ່

ສະພາປະຊາຊົນແຫ່ງຊາດ, ສະຫາຍ ສີ ຈິ້ນຜິງ ໄດ້ຮ່ວມສະເຫຼີມສະຫຼອງຕ້ອນຮັບກຸດຈີນ ຊຶ່ງມີຄະນະຮັບຜິດຊອບຂອງສູນກາງພັກຝ່າຍປະຊາສັງຄົມ ແລະ ສະຫະພັນອຸດສາຫະກໍາການຄ້າແຫ່ງຊາດ ກໍຄືຜູ້ຕາງໜ້າຈາກອົງກອນຕ່າງໆ. ໃນໂອກາດນີ້, ສະຫາຍ ສີ ຈິ້ນຜິງ ໄດ້ສະເໜີຄວາມຄິດເຫັນ 3 ຂໍ້ ຄື: 1. ຍົກສູງຫຼັກໝັ້ນດ້ານການເມືອງ, ຮັດແໜ້ນຄວາມສາມັກຄີພາຍໃນ; 2. ກໍາແໜ້ນວຽກງານໃຈກາງ, ປະກອບຄໍາຄິດຄໍາເຫັນຢ່າງຕັ້ງໜ້າ; 3. ເພີ່ມທະວີການກໍ່ສ້າງອົງການຂອງຕົນໃຫ້ເຂັ້ມແຂງ ເພື່ອຍົກສູງຄວາມສາມາດການປະຕິບັດພາລະໜ້າທີ່.

3) **ການເມືອງເບລາຣຸດຊີ:** ສ.ເບລາຣຸດຊີ ໄດ້ຈັດການເລືອກຕັ້ງປະທານາທິບໍດີຢ່າງເປັນທາງການ ໃນວັນທີ 26/1/2025, ມີຜູ້ສະໝັກທັງໝົດ 5 ທ່ານ ຄື: 1. ທ່ານ Alexander Lukashenko, ປະທານາທິບໍດີ ຄົນປັດຈຸບັນ; 2. ທ່ານ Oleg Gaidukevich, ປະທານພັກເສລີປະຊາທິປະໄຕແຫ່ງ ເບລາຣຸດຊີ; 3. ທ່ານ ນາງ Hanna Kanapatskaya, ຜູ້ສະໝັກອິດສະຫຼະ, ສະມາຊິກສະພາແຫ່ງຊາດເບລາຣຸດຊີ; 4. ທ່ານ Sergei Syrankov, ປະທານພັກກອມມູນິດເບລາຣຸດຊີ; 5. ທ່ານ Alexander Khizhnyak, ຫົວໜ້າພັກແຮງງານ ແລະ ຍຸຕິທໍາ. ມີປະຊາຊົນເບລາຣຸດຊີ ຢູ່ພາຍໃນປະເທດອອກມາໃຊ້ສິດປ່ອນບັດເລືອກຕັ້ງປະມານ 6,9 ລ້ານຄົນ ຂອງຈໍານວນພົນລະເມືອງທັງໝົດ 9,49 ລ້ານຄົນ, ຜົນການເລືອກຕັ້ງເຫັນວ່າ: ທ່ານ Alexander Lukashenko ໄດ້ຮັບໄຊຊະນະດ້ວຍຄະແນນ 87,6%; ອັນດັບສອງໄດ້ແກ່ ທ່ານ Sergei Syrankov, ປະທານພັກກອມມູນິດເບລາຣຸດຊີ ໄດ້ 2,7%; ສ່ວນຜູ້ສະໝັກທ່ານອື່ນ ໄດ້ບໍ່ເກີນ 2%. ຕໍ່ກັບໄຊຊະນະດັ່ງກ່າວ, ມີບັນດາການນໍາປະເທດເພື່ອນມິດ ໄດ້ສົ່ງສານຊົມເຊີຍເຖິງ ທ່ານ Lukashenko ເປັນຕົ້ນຜູ້ນໍາ ຣັດເຊຍ, ສປ.ຈີນ, ກູບາ, ບັນດາການນໍາຂອງປະເທດ CIS, ນິກາຣາກົວ, ເວເນຊູເອລາ ແລະ ສສ.ຫວຽດນາມ. ທ່ານ Lukashenko ເຂົ້າຮັບຕໍາແໜ່ງປະທານາທິບໍດີເບລາຣຸດຊີ ສະໄໝທີ 7 ຢ່າງເປັນທາງການ ໃນວັນທີ 3/2/2025, ຊຶ່ງທ່ານ ໄດ້ປົກຄອງປະເທດ ມາແລ້ວສາມທົດສະວັດ ແລະ ສືບຕໍ່ປົກຄອງປະເທດໄປອີກ 5 ປີ ນະໂຍບາຍຂອງທ່ານແມ່ນ ເດີນຕາມແນວທາງຂອງຂະບວນການກ້າວໜ້າໃນສັງຄົມ, ສືບຕໍ່ປົກປັກຮັກສາປະເທດຊາດ ແລະ ສ້າງສາພັດທະນາເສດຖະກິດ-ສັງຄົມ ໃຫ້ນັບມື້ເຂັ້ມແຂງ, ຕ້ານການແຊກແຊງທາງການເມືອງຈາກພາຍນອກ, ສົ່ງເສີມນະໂຍບາຍສັງຄົມປະຊາທິປະໄຕ, ເຄົາລົບອະທິປະໄຕ ແລະ ນັບຖືສິດທິມະນຸດ, ສືບຕໍ່ເປີດກວ້າງສ້າງສາຍພົວພັນຮ່ວມມືກັບບັນດາປະເທດຕ່າງໆໃນໂລກ ໂດຍການສະໜັບສະໜູນຈາກບັນດາພັກການເມືອງຝ່າຍຊ້າຍໃນຂົງເຂດ ແລະ ໃນໂລກ ໂດຍສະເພາະ ການພົວພັນຮ່ວມມືພິເສດຮອບດ້ານກັບ ສ.ຣັດເຊຍ, ສປ ຈີນ, ສ.ກູບາ, ນິກາຣາກວາ ແລະ ປະເທດອື່ນໆ ໃນນີ້ ລວມມີລາວເຮົາ. ໃນຂະນະທີ່ຝ່າຍຕາເວັນຕົກກ່າວຫາວ່າ ທ່ານ Lukashenko ເປັນຜູ້ນໍາລະເມີດສິດທິມະນຸດ ແລະ ການດໍາລົງຕໍາແໜ່ງເປັນເວລາດົນນານເກີນໄປ.

4) **ການເມືອງການາດາ :** ວັນທີ 6/1/2025, ທ່ານ Justin Trudeau, ນາຍົກລັດຖະມົນການາດາ ໄດ້ປະກາດລາອອກຈາກຕໍາແໜ່ງນາຍົກລັດຖະມົນຕີ ທ່າມກາງສະພາບຄວາມກົດດັນຈາກພາຍໃນພັກຂອງຕົນ ໂດຍມີສາເຫດມາຈາກຄະແນນນິຍົມຫຼຸດລົງ ເຮັດໃຫ້ມີຜົນກະທົບຕໍ່ການເປັນຕົວແທນພັກໃນການເລືອກຕັ້ງຄັ້ງຕໍ່ໄປ. ທ່ານ Trudeau ດໍາລົງຕໍາແໜ່ງຫົວໜ້າພັກເສລີນິຍົມ ມາເປັນ ເວລາ 11 ປີ ແລະ ດໍາລົງຕໍາແໜ່ງນາຍົກລັດຖະມົນຕີເປັນເວລາ 9 ປີ, ແຕ່ທ່ານຈະຍັງຄົງປະຕິບັດໜ້າທີ່ໃນທຸກຕໍາແໜ່ງ ຈົນກວ່າພັກເສລີນິຍົມ ຈະໄດ້ຫົວໜ້າພັກຄົນໃໝ່. ໃນຂະນະທີ່ລັດຖະສະພາ ຈະບໍ່ມີກອງປະຊຸມ ຫຼື ລົງຄະແນນສຽງໄປ ຈົນເຖິງວັນທີ 24/3/2025. ການປະກາດລາອອກຂອງທ່ານ Trudeau ມີຂຶ້ນ ພາຍຫຼັງຄະແນນນິຍົມຂອງທ່ານເລີ່ມຫຼຸດລົງໃນ 2 ປີຜ່ານມາ ເນື່ອງມາຈາກປະຊາຊົນບໍ່ພໍໃຈຕໍ່ບັນຫາຄ່າຄອງຊີບທີ່ສູງຂຶ້ນ ພາຍຫຼັງການລະບາດຂອງພະຍາດໂຄວິດ-19 ແລະ ການຂາດເຂີນທີ່ຢູ່ອາໄສທີ່ເປັນບັນຫາສ້າງຄວາມລໍາບາກໃຫ້ແກ່ປະຊາ ຊົນເປັນຈໍານວນຫຼວງຫຼາຍ, ຊຶ່ງຜົນສໍາຫຼວດຈາກ Ipsos Canada ໃນວັນທີ 22/12/2024 ລາຍງານວ່າ ພັກຝ່າຍ ຄ້ານໄດ້ຮັບຄະແນນນິຍົມ 45% ໃນຂະນະທີ່ພັກເສລີນິຍົມຂອງ ທ່ານ Trudeau ມີຄະແນນນິຍົມພຽງ 20%.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ວັນທີ 14-15/1/2025, ທ່ານ ມິຄາອິນ ວາລາດີເມຍໂອວິກ ມິດຊູສະຕິນ (Mikhail Vladimirovich Mishustin), ນາຍົກລັດຖະມົນຕີ ຣັດເຊຍ ໄດ້ຢ້ຽມຢາມ ຫວຽດນາມ. ສອງຝ່າຍໄດ້ໃຫ້ຄວາມສຳຄັນຕໍ່ການພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ເພີ່ມທະວີການຮັດແໜ້ນຄູ່ຮ່ວມມືຍຸດທະສາດຮອບດ້ານ ໃຫ້ນັບມື້ນັບແໜ້ນແຟ້ນ ແລະ ມີປະສິດທິຜົນ; ຍົກສູງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ; ເຫັນດີເພີ່ມທະວີການຮ່ວມມື ດ້ານເສດຖະກິດ ການຄ້າ, ພະລັງງານ, ວິທະຍາສາດ-ເຕັກໂນໂລຊີ, ການສຶກສາ, ວັດທະນະທຳ, ການທ່ອງທ່ຽວ ແລະ ດ້ານຄວາມໝັ້ນຄົງ, ຄົມມະນາຄົມຂົນສົ່ງຮອບດ້ານ; ໄດ້ລົງນາມໃນຖະແຫຼງການຮ່ວມ ແລະ ເອກະສານຮ່ວມມືຫຼາຍສະບັບ ໃນຂົງເຂດ: ວິທະຍາສາດ, ຂໍ້ມູນຂ່າວສານ - ສື່ສານ ແລະ ວັດທະນະທຳ. ການຄ້າສອງຝ່າຍ ບັນລຸ 4,57 ຕື້ໂດລາສະຫະລັດ ໃນປີ 2024, ເພີ່ມຂຶ້ນ 25% ເມື່ອທຽບໃສ່ປີ 2023, ຣັດເຊຍ ມີ 199 ໂຄງການລົງທຶນຢູ່ ຫວຽດນາມ ດ້ວຍທຶນຈົດທະບຽນປະມານ 990 ລ້ານ ໂດລາສະຫະລັດ, ໃນຂະນະທີ່ ຫວຽດນາມ ຮັກສາ 16 ໂຄງການລົງທຶນທີ່ມີມູນຄ່າ 1,6 ຕື້ໂດລາສະຫະລັດ ໃນຣັດເຊຍ.

ວັນທີ 21/1/2025, ທ່ານ ສີ ຈິ້ນຜິງ, ປະທານປະເທດຈີນ ໄດ້ພົບປະກັບ ທ່ານ ວະລາດີເມຍ ປູຕິນ ປະທານາທິບໍດີ ຣັດເຊຍ ຜ່ານທາງວິດີໂອທາງໄກ. ສອງຝ່າຍ ຈະພ້ອມກັນຮັບມືກັບຄວາມບໍ່ແນ່ນອນຂອງສະພາບແວດລ້ອມພາຍນອກ ດ້ວຍການເພີ່ມທະວີຄວາມໝັ້ນຄົງ ແລະ ຄວາມເຂັ້ມແຂງຂອງການພົວພັນລະຫວ່າງ ຈີນ-ຣັດເຊຍ, ສືບຕໍ່ລົງເລິກການປະສານງານທາງຍຸດທະສາດ, ຍຶດໝັ້ນສະໜັບສະໜູນເຊິ່ງກັນແລະກັນ ຢ່າງເດັດດ່ຽວ, ປົກປັກຮັກສາຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງສອງປະເທດ, ຊຸກຍູ້ໃຫ້ອົງການຮ່ວມມືຕ່າງໆທີ່ທັງສອງປະເທດມີສ່ວນຮ່ວມເຊັ່ນ: ຊຽງໄຮ, ກຸ່ມບຣິກ, ສປຊ… ໃຫ້ເຂົ້າສູ່ລວງເລິກ. ໃນວັນທີ 27/01/2025, ທ່ານ Wang Yi, ລັດຖະມົນຕີຕ່າງປະເທດ ຈີນ ພົບປະກັບ ທ່ານ Vikram Misri, ລັດຖະມົນຕີຕ່າງປະເທດ ອິນເດຍ ທີ່ນະຄອນຫຼວງປັກກິ່ງ, ສອງຝ່າຍ ຮຽກຮ້ອງໃຫ້ເສີມສ້າງຄວາມໄວ້ວາງໃຈ ແລະ ຄວາມເຂົ້າໃຈເຊິ່ງກັນແລະກັນ ເພື່ອຫຼຸດຜ່ອນຄວາມເຄັ່ງຕຶງຕາມເຂດຊາຍແດນ, ຫັນໜ້າເຂົ້າຫາກັນດ້ວຍຄວາມໄວ້ວາງໃຈ ແລະໃກ້ຊິດກັນຫຼາຍຂຶ້ນ, ສອດຄ່ອງກັບຜົນປະໂຫຍດຂອງທັງສອງປະເທດ, ສົ່ງເສີມສັນຕິພາບ ແລະ ສະຖຽນລະພາບພາກພື້ນ ແລະ ສາກົນ. ການພົບປະຄັ້ງນີ້ ຖືເປັນການສືບຕໍ່ຄວາມພະຍາຍາມທາງການທູດ ເພື່ອແກ້ໄຂຄວາມເຄັ່ງຕຶງຕາມຊາຍແດນ ທີ່ມີຂໍ້ຂັດແຍ່ງລະຫວ່າງສອງປະເທດ.

ວັນທີ 19/1/2025, ການພົບປະບໍ່ເປັນທາງການ ຂອງລັດຖະມົນຕີການຕ່າງປະເທດ ອາຊຽນ ທີ່ເມືອງລັງກາວີ, ປະເທດມາເລເຊຍ, ໄດ້ຖະແຫຼງຂ່າວວ່າ: ການຢຸດຕິຄວາມຮຸນແຮງຈາກການປະທະກັນ ແມ່ນພາລະກິດທີ່ສຳຄັນກວ່າການເລືອກຕັ້ງທົ່ວໄປຄັ້ງໃໝ່ ທີ່ຈະເກີດຂຶ້ນໃນ ມຽນມາ. ພ້ອມດຽວກັນນັ້ນ, ມາເລເຊຍ ໄດ້ແຕ່ງຕັ້ງທ່ານ ອໍມັນ ຣາຊິມ ອະດີດລັດຖະມົນຕີ ວ່າການກະຊວງການຕ່າງປະເທດ ມາເລເຊຍ ເປັນທູດພິເສດອາຊຽນ ປະຈຳ ມຽນມາ. ສປ ຈີນ ໄດ້ຖະແຫຼງການໃນວັນທີ 21/1/2025 ວ່າ ທະຫານ ມຽນມາ ແລະ ກອງກຳລັງ NDAA ໄດ້ມີການຈັດການເຈລະຈາຢູ່ນະຄອນຄຸນໝິງ ຂອງຈີນ. ສອງຝ່າຍ ໄດ້ລົງນາມຢຸດຍິງ, ຊຶ່ງເລີ່ມແຕ່ວັນທີ 18/1/2025 ເປັນຕົ້ນມາ, ໂດຍໄດ້ຢຸດຕິການສູ້ຮົບກັນຢູ່ໃກ້ຊາຍແດນ ມຽນມາ ແລະ ຈີນ, ຊຶ່ງເປັນຜົນດີ ໂດຍລວມຕໍ່ທຸກຝ່າຍໃນ ມຽນມາ ແລະ ພາກພື້ນ. ທັງເປັນການປະກອບສ່ວນເຂົ້າໃນການຮັກສາຄວາມໝັ້ນຄົງ, ສະຖຽນລະພາບ ແລະ ການພັດທະນາເຂດຊາຍແດນລະຫວ່າງ ຈີນ ກັບ ມຽນມາ, ຈີນຈະສືບຕໍ່ຊຸກຍູ້ສັນຕິພາບ, ການປຶກສາຫາລື, ໃຫ້ການສະໜັບສະໜູນຊ່ວຍເຫຼືອແກ່ຂະບວນການສັນຕິພາບ ຢູ່ພາກເໜືອ ຂອງມຽນມາ.

ພາຍຫຼັງທີ່ ທ່ານ ຢຸນ ຊອກ ຢອນ (Yoon Suk Yeol), ປະທານາທິບໍດີ ໄດ້ປະກາດກົດໄອຍະການເສິກ ໃນວັນທີ 3/12/2024, ເຮັດໃຫ້ ພັກຝ່າຍຄ້ານ ຂອງສະພາແຫ່ງຊາດ ຍື່ນຖອດຖອນປະທານາທິບໍດີ ຢຸນ ຊອກ ຢອນ ໃນຂໍ້ຫາປະກາດກົດໄອຍະການເສິກທີ່ຜິດກົດໝາຍ ແລະ ຍື່ນມະຕິຖອດຖອນຕໍ່ສານລັດຖະທຳມະນູນ ເພື່ອພິຈາລະນາວ່າ ທ່ານ Yoon ຄວນຈະອອກຈາກ ຕຳແໜ່ງ ຫຼືບໍ່ ແລະ ໃນວັນທີ 31/12/2024, ສານ ສ.ເກົາຫຼີ ໄດ້ອອກໝາຍຈັບທ່ານ ຢຸນ ຊອກ ຢອນ ວັນທີ 15/1/2025, ເຈົ້າໜ້າທີ່ ສ.ເກົາຫຼີ ສາມາດຈັບກຸມ ທ່ານ ຢຸນ ຊອກ ຢອນ, ປະທານາທິບໍດີ ສ.ເກົາຫຼີ, ທັງໄດ້ດຳເນີນການສືບສວນ ທ່ານ ຢຸນ, ແຕ່ທ່ານ ໄດ້ປະຕິເສດທຸກຂໍ້ກ່າວຫາ ແລະ ບໍ່ໃຫ້ເຈົ້າໜ້າທີ່ບັນ

ທຶກຂໍ້ມູນໃດໆ. ວັນທີ 21/1/2025, ທ່ານ ຢຸນ ຊອກ ຢອນ ໄດ້ຂຶ້ນສານລັດຖະທຳມະນູນເປັນຄັ້ງທຳອິດ ເພື່ອໃຫ້ຂໍ້ມູນ ກ່ຽວກັບ ການປະກາດກົດໄອຍະການສຸກເສີນ. ສານລັດຖະທຳມະນູນ ສ.ເກົາຫຼີ ຈະພິຈາລະນາພາຍໃນ 180 ວັນ ວ່າ ທ່ານ ຢຸນ ຈະຖືກຖອນອອກຈາກຕຳແໜ່ງປະທານາທິບໍດີ ຫຼື ບໍ່ ແລະ ປັດຈຸບັນ, ທ່ານ ຢຸນ ຍັງຖືກຄຸມຂັງຢູ່ຄຸກ ເປັນເວລາ 180 ວັນ ຈົນກວ່າຂະບວນການສອບສວນຈະສຳເລັດ ແລະ ຈະມີການເລືອກຕັ້ງປະທານາທິບໍດີ ສ.ເກົາຫຼີ ຄົນໃໝ່ ໃນໄລຍະ 60 ວັນ.

ສ.ເກົາຫຼີ ໄດ້ກ່າວວ່າ ວັນທີ 5/1/2025, ສປປ ເກົາຫຼີ ໄດ້ຍິງລູກສອນໄຟຄວາມໄວເໜືອສຽງ ໄລຍະກາງ (IRBM) ໄປຍັງທະເລຕາເວັນອອກ ຫ່າງຈາກ ສປປ ເກົາຫຼີ ເປັນໄລຍະທາງ 1.100 ກິໂລແມັດ ກ່ອນຈະຕົກລົງທະເລ ຊຶ່ງ ເປັນການຍິງລູກສອນໄຟຄັ້ງທຳອິດ ຂອງປີ 2025. ການຍິງລູກສອນໄຟດັ່ງກ່າວເກີດຂຶ້ນ ໃນໄລຍະທີ່ ທ່ານ Antony Blinken, ລັດຖະມົນຕີຕ່າງປະເທດ ອາເມຣິກາ ກຳລັງຢ້ຽມຢາມ ສ.ເກົາຫຼີ ແລະ ທ່ານ Blinken ໄດ້ຮຽກຮ້ອງໃຫ້ມີການສື່ສານທາງການທູດ ແລະ ດ້ານຄວາມໝັ້ນຄົງຢ່າງໃກ້ຊິດ ລະຫວ່າງ ອາເມຣິກາ-ສ.ເກົາຫຼີ ເພື່ອຢຸດຕິການຍຸແຍ່ທີ່ອາດຈະເກີດຂຶ້ນຈາກ ສປປ ເກົາຫຼີ. ໃນວັນທີ 25/01/2025, ທ່ານ Joseph Yun, ຮັກສາການເອກອັກຄະລັດຖະທູດ ສ. ອາເມລິກາ ປະຈຳ ສ.ເກົາຫຼີ ໄດ້ເຂົ້າພົບປະກັບ ທ່ານ Kim Seon-ho, ຮັກສາການລັດຖະມົນຕີປ້ອງກັນປະເທດ. ສອງຝ່າຍໄດ້ປຶກສາຫາລືກັນ ກ່ຽວກັບ ຫຼາຍ ໂດຍສະເພາະ ດ້ານວຽກງານປ້ອງກັນຊາດ ໂດຍໄດ້ໃຫ້ຄຳໝັ້ນສັນຍາເຊິ່ງກັນແລະກັນ ວ່າ ຈະປະສານງານ ຢ່າງໃກ້ຊິດ ຜ່ານຊ່ອງທາງການທູດ.

ວັນທີ 7/1/2025, ຟີລິບປິນ ໄດ້ສົ່ງກອງກຳລັງທະຫານທາງອາກາດ, ທາງທະເລ ແລະ ໜ່ວຍງານຍາມຝັ່ງ ໄປປະຈຳການຢູ່ເຂດເສດຖະກິດສະເພາະຂອງຕົນ ເພື່ອຕິດຕາມ ແລະ ກວດກາກຳປັ່ນຂອງໜ່ວຍງານຍາມຝັ່ງ ສປ ຈີນ, ຊຶ່ງ ຟີລິບປິນ ຖືວ່າເປັນການກະທຳທີ່ຂົ່ມຂູ່, ບີບບັງຄັບ ແລະ ຮຸກຮານ ຂອງຈີນ. ໃນໄລຍະບໍ່ພໍເທົ່າໃດປີຜ່ານມາ ຟີລິບປິນ ແລະ ຈີນ ໄດ້ມີການໂຕ້ຕອບກັນໄປມາຢູ່ຫຼາຍຄັ້ງ ແລະ ກ່າວຫາກັນໄປມາວ່າຕ່າງຝ່າຍຕ່າງເປັນຜູ້ຮຸກຮານອະທິປະໄຕຂອງຕົນເອງ. ໃນວັນທີ 17-18/1/2025, ອາເມຣິກາ ແລະ ຟີລິປິນ ໄດ້ຊ້ອມຮົບຮ່ວມກັນທາງທະເລ ເປັນຄັ້ງທີ 5 ໃນທະເລຈີນໃຕ້ ສ້າງຄວາມບໍ່ພໍໃຈໃຫ້ແກ່ ສປ ຈີນ. ວັນທີ 28/01/25, ເຈົ້າໜ້າທີ່ໜ່ວຍຍາມຝັ່ງ ແລະ ເຈົ້າໜ້າທີ່ການປະມົງ ຂອງຟີລິບປິນ, ອາເມຣິກາ, ຫວຽດນາມ ແລະ ອິນໂດເນເຊຍ ຝຶກອົບຮົມການຮ່ວມມືດ້ານກົດໝາຍທາງທະເລ ແລະ ເຕັກນິກການຈັບກຸມ, ເປັນເວລາ 2 ອາທິດ ຢູ່ເກາະ Mindanao ທາງພາກໃຕ້ ຂອງຟີລິບປິນ, ເພື່ອຊຸກຍູ້ການຮ່ວມມື ດ້ານການບັງຄັບໃຊ້ກົດໝາຍ ເນື່ອງຈາກຄວາມຢ້ານກົວຕໍ່ຄວາມຂັດແຍ່ງທາງທະເລກັບ ສປ.ຈີນ. ພ້ອມນັ້ນ, ກໍໄດ້ຮ່ວມກັນຢືນຢັນໃນຄຳໝັ້ນສັນຍາ ຂອງພວກຕົນ ເພື່ອເປັນການຮັບປະກັນອະທິປະໄຕທາງທະເລ ດັ່ງກ່າວວ່າ ຍັງຄົງເປັນຂົງເຂດສັນຕິພາບ, ມີຄວາມປອດໄພ ແລະ ຄວາມຈະເລີນຮຸ່ງເຮືອງ ສຳລັບທຸກຝ່າຍ.

### 2) ສະພາບການຢູ່ພາກພື້ນເອີຣົບ-ອາເມຣິກາ

**ສ.ຣັດເຊຍ:** ວັນທີ 17/1/2025, ທ່ານ Vladimir Putin, ປະທານາທິບໍດີ ຣັດເຊຍ ແລະ ທ່ານ Masoud Pezeshkian, ປະທານາທິບໍດີ ອີຣ່ານ ໄດ້ລົງນາມໃນສົນທິສັນຍາຄູ່ຮ່ວມມືຍຸດທະສາດຮອບດ້ານ ຄົບຮອບ 20 ປີ, ຢູ່ນະຄອນຫຼວງມົດສະກູ. ຂໍ້ຕົກລົງສະບັບນີ້ ແນໃສ່ເພີ່ມທະວີການຮ່ວມມືໃນບັນດາຂະແໜງການຄວາມໝັ້ນຄົງ ແລະ ການປ້ອງກັນປະເທດ, ຕ້ານການກໍ່ການຮ້າຍ, ພະລັງງານ, ການເງິນ ແລະ ຂົງເຂດວັດທະນະທຳ ຊຶ່ງເນື້ອໃນຕົ້ນຕໍຂອງສົນທິສັນຍາ ລວມມີ: ການຮ່ວມມືດ້ານວຽກງານປ້ອງກັນປະເທດ, ການຮ່ວມມືດ້ານພະລັງງານ, ການພົວພັນດ້ານເສດຖະກິດ ແລະ ການຄ້າ. ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີ ຣັດເຊຍ ໄດ້ໂທລະສັບຫາ ທ່ານ ອິນຮາມ ອາລີເຢັບ (Ilham Aliyev), ປະທານາທິບໍດີ ອາແຊກໄບຊານ ເພື່ອສະແດງຄວາມເສົ້າສະຫຼົດໃຈຕໍ່ເຫດການເຮືອບິນ ກາຊັກສະຖານ ທີ່ຕົກໃນນ່ານຟ້າ ຂອງຣັດເຊຍ ວັນທີ 25/12/2024 ຜ່ານມາ. ທ່ານ ປູຕິນ ໄດ້ຂໍໂທດ ຕໍ່ເຫດການດັ່ງກ່າວ, ພ້ອມທັງກ່າວວ່າ ເຫດການດັ່ງກ່າວ ເກີດຂຶ້ນໃນລະຫວ່າງທີ່ໂດຣນ ຂອງອູແກຣນ ໂຈມຕີ, ກຳລັງຖືກຂັບໄລ່ດ້ວຍລະບົບປ້ອງກັນໄພທາງອາກາດ ຂອງຣັດເຊຍ. ຄະນະກຳມະການສອບສວນ ຂອງຣັດເຊຍ ກຳລັງສອບສວນເຖິງຄວາມເປັນໄປໄດ້ຂອງເຫດການນີ້ວ່າ ອາດຈະມີການລະເມີດກົດຄວາມປອດໄພດ້ານການຈໍລະຈອນທາງອາກາດ ຫຼື ບໍ່.

**ສ.ອາເມຣິກາ:** ວັນທີ 20/1/2025, ທ່ານ Donald Trump ໄດ້ສາບານຕົນຮັບຕຳແໜ່ງປະທານາທິບໍດີ ອາເມຣິກາ ຄົນທີ 47 ແລະ ທ່ານ ໄດ້ກ່າວວ່າ ນີ້ຄືຈຸດເລີ່ມຕົ້ນຂອງ "ຍຸກຮຸ່ງເຮືອງ" ຂອງອາເມຣິກາ ແລະ ສັນຍາວ່າ ຈະ

ນຳປະເທດກັບຄືນສູ່ຄວາມສະຫງ່າງາມ ແລະ ໄດ້ຮັບຄວາມເຄົາລົບຈາກທົ່ວໂລກ. ເປັນຄັ້ງທຳອິດໃນປະຫວັດສາດ ອາເມຣິກາ ທີ່ມີບຸກຄົນສຳຄັນທັງພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມ ເຊັ່ນ: ບັນດາອະດີດ ປະທານາທິບໍດີ ອາເມຣິກາ ແລະ ຜູ້ນຳຂັ້ນສູງຂອງຕ່າງປະເທດເຂົ້າຮ່ວມ ພິເສດ ທ່ານ Han Zheng, ຮອງປະທານປະເທດ ສປ.ຈີນ, ຊຶ່ງເປັນຄັ້ງທຳອິດທີ່ຜູ້ນຳລະດັບສູງຂອງ ສປ.ຈີນ ເຂົ້າຮ່ວມພິທີດັ່ງກ່າວ. ທ່ານ Trump ໄດ້ເລີ່ມປະຕິບັດໜ້າທີ່ ໂດຍການລົງນາມເອກະສານຄຳສັ່ງສຳຄັນ ຫຼາຍສະບັບ ເຊັ່ນ: ຄຳສັ່ງການສະກັດກັ້ນເຂົ້າເມືອງຜິດກົດໝາຍ, ຄຳສັ່ງຢຸດຕິການໃຫ້ສັນຊາດໂດຍກຳເນີດ ສຳລັບລູກຂອງພໍ່ແມ່ທີ່ເປັນຜູ້ອົບພະຍົບຜິດກົດໝາຍ, ຄຳສັ່ງດ້ານພະລັງງານ-ສິ່ງແວດລ້ອມ, ຄຳສັ່ງກ່ຽວກັບຂໍ້ບັງຄັບ ດ້ານລົດໄຟຟ້າ, ຄຳສັ່ງ ກ່ຽວກັບ ການຖອນ ອາເມຣິກາ ອອກຈາກ ຂໍ້ຕົກລົງປາຣີ ວ່າດ້ວຍການປ່ຽນແປງສະພາບອາກາດ ຄັ້ງທີ 2, ຄຳສັ່ງການຂຶ້ນພາສີນຳເຂົ້າສິນຄ້າຈາກ ປະເທດການາດາ ແລະ ເມັກຊິກ, ຄຳສັ່ງການຖອນ ອາເມຣິກາ ອອກຈາກ ອົງການອະນາໄມໂລກ, ຄຳສັ່ງກຳນົດໃຫ້ລັດຖະບານມີນະໂຍບາຍຍອມຮັບພຽງສອງເພດຄື ຊາຍ ແລະ ຍິງ, ຍົກເລີກເອກະສານຄຳສັ່ງສຳຄັນຂອງອະດີດປະທານາທິບໍດີ Joe Biden ຈຳນວນ 78 ສະບັບ, ຄຳສັ່ງອະໄພໂທດ ໃຫ້ຜູ້ທີ່ກ່ຽວຂ້ອງກັບເຫດການກໍ່ຈະລາຈົນ ທີ່ລັດຖະສະພາ ໃນວັນທີ 6/1/2021 ຈຳນວນ 1,500 ຄົນ, ຄຳສັ່ງໃຫ້ພະນັກງານລັດຖະກອນ ກັບເຂົ້າມາເຮັດວຽກເຕັມເວລາ, ຄຳສັ່ງເລື່ອນການຫ້າມນຳໃຊ້ແອັບ TikTok ອອກໄປອີກ 75 ວັນ, ຄຳສັ່ງປ່ຽນຊື່ອ່າວເມັກຊິກ ເປັນອ່າວອາເມລິກາ ແລະ ປ່ຽນຊື່ພູທີ່ສູງທີ່ສຸດຂອງ Alaska ຄື Mount Denali ເປັນ Mount McKinley ເພື່ອໃຫ້ກຽດຕໍ່ອະດີດປະທານາທິບໍດີ ຄົນທີ 25, ຄຳສັ່ງກຳນົດເອົາກຸ່ມບາເຂົ້າໃນບັນຊີລາຍຊື່ລັດສະໜັບສະໜູນລັດທິກໍ່ການຮ້າຍ ຂອງອາເມຣິກາຄືນ ພາຍຫຼັງລັດຖະບານ ຂອງອະດີດປະທານາທິບໍດີ ໂຈໄບ ເດັນ ໄດ້ຍົກເລີກກ່ອນໜ້ານີ້, ຄຳສັ່ງ ສ້າງອົງການທີ່ມີປະສິດທິພາບຂອງລັດຖະບານ ທີ່ນຳພາໂດຍມະຫາເສດຖີ ທ່ານ Elon Musk. ນອກຈາກນັ້ນ, ເຈົ້າໜ້າທີ່ຂອງໜ່ວຍງານລັດຖະບານ ອາເມຣິກາ ໄດ້ດຳເນີນການຈັບກຸມຜູ້ອົບພະຍົບເຂົ້າເມືອງຜິດກົດໝາຍທົ່ວປະເທດ ໄດ້ຈຳນວນ 956 ຄົນ ພາຍໃນວັນທີ 26/1/205 ແລະ ຮອດປັດຈຸບັນ, ຕົວເລກຜູ້ອົບພະຍົບເຂົ້າເມືອງຜິດກົດໝາຍ ທີ່ຖືກເຈົ້າໜ້າທີ່ຈັບກຸມທັງໝົດມີ 2.373 ຄົນ. ພ້ອມກັນນີ້, ຍັງໄດ້ສົ່ງທະຫານໄປປະຈຳການຕາມຊາຍແດນທີ່ຕິດກັບ ເມັກຊິກ ເພີ່ມອີກ 1.500 ຄົນ, ຊຶ່ງປັດຈຸບັນທະຫານ ທີ່ປະຈຳການຢູ່ພື້ນທີ່ຊາຍແດນມີປະມານ 4.000 ຄົນ. ນອກຈາກນີ້, ວັນທີ 28/01/2025, ສ.ອາເມຣິກາ ຍັງໄດ້ອອກຄຳສັ່ງໂຈະການຈັດສົ່ງຢາຮັກສາເຊື້ອ HIV, ໄຂ້ຍຸງ ແລະ ວັນນະໂຣກ ລວມທັງອຸປະກອນການແພດສຳລັບເດັກເກີດໃໝ່ໄປໃຫ້ບັນດາປະເທດທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການເພື່ອການພັດທະນາສາກົນ ຂອງ ສ.ອາເມຣິກາ (USAID) ໃນທົ່ວໂລກ ໃນໄລຍະ 90 ວັນ . ແຕ່ບໍລິສັດຜູ້ຮັບເໝົາ ແລະ ຫຸ້ນສ່ວນທີ່ເຮັດວຽກຮ່ວມກັບອົງການ USAID ຈະສືບຕໍ່ໃຫ້ຄວາມຊ່ວຍເຫຼືອມະນຸດສະທຳ ໃນໄລຍະອາເມຣິກາ ຢຸດຕິການຊ່ວຍເຫຼືອດັ່ງກ່າວ.

**ບັນຫາຣັດເຊຍ-ອູແກຣນ:** ກອງທັບ ຣັດເຊຍ ບຸກຄືບໜ້າຢ່າງຊ້າໆ ແຕ່ສະໝໍ່າສະເໝີ ໃນພາກຕາເວັນອອກຂອງອູແກຣນ ມາເປັນເວລາໜຶ່ງປີແລ້ວ. ໃນຂະນະທີ ກອງທັບ ອູແກຣນ ມີຈຳນວນພົນໜ້ອຍລົງເລື້ອຍໆໃນສະໜາມຮົບ. ລັດຖະບານອູແກຣນ ແກ້ໄຂບັນຫາດັ່ງກ່າວ ໂດຍການຫຼຸດອາຍຸການເກນທະຫານຈາກ 27 ປີ ມາເປັນ 25 ປີ ແລະ ອອກກົດລະບຽບ ທີ່ເຂັ້ມງວດຂຶ້ນສຳລັບຜູ້ທີ່ຫຼີກລ່ຽງການເກນທະຫານ. ສ່ວນສະພາຄວາມໝັ້ນຄົງ ຣັດເຊຍ ໄດ້ລາຍງານວ່າ ໃນປີ 2024, ມີປະຊາຊົນ ຣັດເຊຍ ປະມານ 450,000 ຄົນ ໄດ້ລົງທະບຽນເຂົ້າຮັບໃຊ້ກອງທັບ ຣັດເຊຍ, ຄາດວ່າ ປີ 2025 ຈະໄດ້ຮັບຕົວເລກທີ່ໃກ້ຄຽງກັນ. ວັນທີ 30/12/2024, ອູແກຣນ ແລະ ຣັດເຊຍ ໄດ້ແລກປ່ຽນຊະເລີຍເສິກ ຝ່າຍລະ 150 ຄົນ. ວັນທີ 6/1/2025, ກອງກຳລັງ ຣັດເຊຍ ສາມາດປົດປ່ອຍເມືອງ Kurakhovo ໃນແຄ້ວນໂດເນັດ ໄດ້ສົມບູນ, ຊຶ່ງເປັນຍຸດທະສາດສຳຄັນດ້ານການຂົນສົ່ງ. ເຮັດໃຫ້ກອງກຳລັງ ຣັດເຊຍ ມີຊ່ອງທາງໃນການເຄື່ອນກຳລັງພົນຫຼາຍຂຶ້ນ, ຊຶ່ງໄດ້ຊ່ວຍໃຫ້ສາມາດປົດປ່ອຍເມືອງ Velyka Novosilka ໃນສາທາລະນະລັດປະຊາຊົນ Donetsk ເພີ່ມຂຶ້ນ ແລະ ໄດ້ລະດົມໂຈມຕີ ນະຄອນຫຼວງ ກີແອບ ຂອງອູແກຣນ ຢ່າງໜັກໜ່ວງໂດຍສະເພາະແມ່ນ ຈຸດຝຶກຊ້ອມທາງທະຫານ ຂອງນາໂຕ້. ໃນວັນທີ 13/1/2025, ກອງທັບ ອູແກຣນ ໄດ້ໂຈມຕີເມືອງ Seltso ທີ່ຕັ້ງຢູ່ທາງພາກຕາເວັນຕົກສ່ຽງເໜືອຂອງເຂດ Bryansk ແລະ ເປັນເມືອງຫຼວງຂອງເຂດດັ່ງກ່າວ, ເປັນທີ່ຕັ້ງຂອງໂຮງງານເຄມີຂະໜາດໃຫຍ່ ແຕ່ຖືກລະບົບປ້ອງກັນໄພທາງອາກາດ ຂອງຣັດເຊຍ ສະກັດໄວ້ໄດ້. ໃນວັນທີ 20/1/2025, ທີ່ກອງປະຊຸມສະພາຄວາມໝັ້ນຄົງແຫ່ງຊາດຣັດເຊຍ ທ່ານ Vladimir Putin ກ່າວວ່າ ຣັດເຊຍ

ສະແດງຄວາມຍິນດີນຳ ທ່ານ Donald Trump ທີ່ເຂົ້າຮັບຕຳແໜ່ງປະທານາທິບໍດີ ອາເມຣິກາ ແລະ ຍິນດີຕໍ່ຄວາມຕັ້ງໃຈຂອງທ່ານ ທີ່ຈະກັບມາມີການຕິດຕໍ່ພົວພັນກັນ ລະຫວ່າງສອງປະເທດຄືນໃໝ່, ຊຶ່ງຣັດເຊຍ ບໍ່ເຄີຍປະຕິເສດ ແລະ ພ້ອມທີ່ຈະເຈລະຈາກັບ ລັດຖະບານ ອາເມຣິກາ ຕະຫຼອດມາ. ພ້ອມນີ້, ກໍຍັງຄົງຍຶດໝັ້ນໃນຫຼັກການທີ່ວ່າ ການເຈລະຈາ ຕ້ອງຢູ່ບົນພື້ນຖານຄວາມເທົ່າທຽມ ແລະ ເຄົາລົບເຊິ່ງກັນ ແລະ ກັນ. ແຕ່ຍັງບໍ່ມີລາຍລະອຽດທີ່ຈະແຈ້ງວ່າຈະມີການເຈລະຈາກັນເມື່ອໃດ ແລະ ຢູ່ໃສ. ໃນບັນຫາດັ່ງກ່າວນີ້ ທ່ານ Trump ໄດ້ໃຫ້ເວລາ 100 ວັນ ແກ່ ທ່ານ Keith Kellogg, ຜູ້ແທນພິເສດຂອງທ່ານ ທີ່ຮັບຜິດຊອບບັນຫາ ອູແກຣນ ເພື່ອສະຫຼຸບຂໍ້ຕົກລົງລະຫວ່າງ ຣັດເຊຍ ແລະ ອູແກຣນ ຊຶ່ງມີແນວໂນ້ມເປັນໄປໄດ້ທີ່ທີມງານທ່ານ Trump ກຳລັງພິຈາລະນາແຜນສັນຕິພາບ ສຳລັບ ອູແກຣນ ທ່ານ Marco Rubio, ລັດຖະມົນຕີຕ່າງປະເທດ ອາເມຣິກາ ກ່າວວ່າ ບັນຫາອູແກຣນ ຈະເປັນບູລິມະສິດສຳຄັນທີ່ສຸດ ສຳລັບ ປະທານາທິບໍດີ ອາເມຣິກາ, ຊຶ່ງ ທ່ານ Trump ຈະເລີ່ມການເຮັດວຽກ ເພື່ອບັນລຸຂໍ້ຕົກລົງຢຸດຍິງໃນ ອູແກຣນ ທັນທີ ແລະ ທ່ານຢໍ້າວ່າ ອູແກຣນ ແລະ ຣັດເຊຍ ຈະຕ້ອງຍອມຮັບບາງສິ່ງບາງຢ່າງ ເພື່ອເປັນສ່ວນໜຶ່ງຂອງຂໍ້ຕົກລົງ ແລະ ທຸກຢ່າງຄວນດຳເນີນຜ່ານທາງການທູດຈະດີທີ່ສຸດ. ວັນທີ 17/1/2025, ທ່ານ Olaf Scholz, ນາຍົກລັດຖະມົນຕີເຢຍລະມັນ ກ່າວວ່າ: ຄວາມຂັດແຍ່ງ ລະຫວ່າງ ຣັດເຊຍ ແລະ ອູແກຣນ ຈະຢຸດຕິລົງໃນປີ 2025 ແລະ ທ່ານໄດ້ຄັດຄ້ານການສົ່ງລູກສອນໄຟໄລຍະໄກໄປຍັງ ອູແກຣນ. ວັນທີ 16/1/2025 ຜ່ານມາ ທ່ານ ເກຍ ສະຕາເມີ (keir Starmer), ນາຍົກລັດຖະມົນຕີອັງກິດ ໄດ້ຢ້ຽມຢາມ ອູແກຣນ, ພົບປະທ່ານ Zelenskyy, ປະທານາທິບໍດີ ອູແກຣນ ໄດ້ລົງນາມການເປັນພັນທະມິດ ລະຫວ່າງ ອັງກິດ ແລະ ອູແກຣນ ໃນໄລຍະ 100 ປີ ສະແດງເຖິງການຢັ້ງຢືນການຊ່ວຍເຫຼືອ ອູແກຣນ ຕໍ່ໄປ.

### 3. ຂໍ້ຂັດແຍ່ງຢູ່ພາກພື້ນຕາເວັນອອກກາງ

ວັນທີ 01/01/2025, ອິດສະຣະແອນ ຍັງສືບຕໍ່ການໂຈມຕີທາງພາກໃຕ້ ລີບັງ ແລະ ໃນທົ່ວເຂດກາຊາ ໂດຍສະເພາະ ໃນເມືອງ Jabalia ແລະ ໃນຄ້າຍຜູ້ລີ້ໄພ al-Bureij ເຮັດໃຫ້ມີຜູ້ເສຍຊີວິດ ຫຼາຍ 10 ຄົນ ໃນແຕ່ລະວັນ. ປະຊາຊົນ ປາແລັດສະຕິນ ຍັງຕ້ອງປະເຊີນກັບໄພໜາວ ແລະ ໄພນໍ້າຖ້ວມຈາກຝົນຕົກໜັກຕິດຕໍ່ກັນຫຼາຍວັນ, ເຮັດໃຫ້ນໍ້າຖ້ວມທີ່ພັກອາໄສຊົ່ວຄາວໃນຄ້າຍຜູ້ລີ້ໄພ ທາງພາກໃຕ້ ຂອງເຂດກາຊາ, ນອກຈາກຊາວ ອິດສະຣາແອນ ທີ່ຕັ້ງຖິ່ນຖານຢູ່ເຂດເວັດແບັງ ແບບຜິດກົດໝາຍ ຍັງໄດ້ໂຈມຕີປະຊາຊົນ ປາແລັດສະຕິນ ແລະ ຈູດເຜົາເຮືອນຂອງພວກເຂົາໃນເມືອງ Ramallah. ກຸມຮິດບອນເລາະ ໃນລີບັງ ກ່າວວ່າ ກຸ່ມພ້ອມທີ່ຈະຕອບໂຕ້ການລະເມີດຂໍ້ຕົກລົງຢຸດຍິງຂອງອິດສະຣາແອນ ທັງໝົດ 9 ຄັ້ງ ນັບຕັ້ງແຕ່ຂໍ້ຕົກລົງຢຸດຍິງມີຜົນບັງຄັບໃຊ້ວັນທີ 27/11/ 2024 ແລະ ຮຽກຮ້ອງອິດສະຣາແອນ ເຄົາລົບຂໍ້ຢຸດຍິງດັ່ງກ່າວ. ວັນທີ 05/01/25, ລັດຖະບານຂອງປະທານາທິບໍດີ Joe Biden ໄດ້ແຈ້ງຕໍ່ລັດຖະສະພາ ກ່ຽວກັບແຜນຂາຍອາວຸດທີ່ມີມູນຄ່າ 8 ຕື້ໂດລາສະຫະລັດ ໃຫ້ ອິດສະຣາແອນ ເພື່ອຮັກສາການສະໜັບສະໜູນພັນທະມິດຂອງ ອາເມຣິກາ ໃນສົງຄາມທີ່ເກີດຂຶ້ນໃນເຂດກາຊາ. ໃນເດືອນສິງຫາ ຜ່ານມາ, ອາເມຣິກາ ໄດ້ອະນຸມັດຂາຍເຮືອບິນສູ້ຮົບ, ອຸປະກອນທະຫານອື່ນໆ ໃນມູນຄ່າ 20 ຕື້ໂດລາສະຫະລັດ ໃຫ້ ອິດ ສະຣາແອນ.

ວັນທີ 16/1/2025 ອິດສະຣາແອນ ແລະ ກຸ່ມຮາມາສ ໄດ້ບັນລຸສັນຍາຢຸດຍິງ ເປັນເວລາ 42 ວັນ ນັບແຕ່ວັນທີ 19/1/2025 ເປັນຕົ້ນໄປ. ຂໍ້ຕົກລົງດັ່ງກ່າວ ອະນຸຍາດໃຫ້ປ່ອຍຕົວປະກັນ ອິດສະຣາແອນ 33 ຄົນ ແລກກັບນັກໂທດປາແລັດສະຕິນ ຈຳນວນຫຼາຍຮ້ອຍຄົນ; ຖອນທະຫານອິດສະຣາແອນບາງສ່ວນ ເພື່ອເປີດທາງໃຫ້ແກ່ການຊ່ວຍເຫຼືອທາງດ້ານມະນຸດສະທຳ ໃນເຂດກາຊາຫຼາຍຂຶ້ນ. ສ່ວນກຸ່ມຮູຕີ ໄດ້ຖະແຫຼງຢຸດໂຈມຕີ ໃນທະເລແດງ ເພື່ອສະໜັບສະໜູນ ຂໍ້ຕົກລົງດັ່ງກ່າວ. ຫຼັງຈາກຂໍ້ຕົກລົງດັ່ງກ່າວ, ໃນວັນທີ 20/1/2025 ໄດ້ມີການແລກປ່ຽນຕົວປະກັນຊາວ ອິດສະຣາແອນ 3 ຄົນ ຕໍ່ນັກໂທດຊາວ ປາແລັດສະຕິນ 90 ຄົນ ຈາກຄຸກໃນເຂດເວັດແບັງ, ແຕ່ກາງຄືນຂອງວັນດຽວກັນ ຜູ້ຕັ້ງຖິ່ນຖານຊາວ ອິດສະຣາແອນຫຼາຍສິບຄົນ ພາຍໃຕ້ການຄຸ້ມຄອງຂອງກອງທັບອິດສະຣາແອນ ໄດ້ບຸກໂຈມຕີປະຊາຊົນປາແລັດສະຕິນ ທີ່ຢູ່ທາງທິດຕາເວັນອອກຂອງເຂດເວັດແບວງ ດ້ວຍການຈູດໄຟເຜົາເຮືອນຂອງພວກເຂົາ ເຮັດໃຫ້ເກີດການປະທະກັນໃນພື້ນທີ່ດັ່ງກ່າວ.

ການແລກປ່ຽນຕົວປະກັນຊາວອິດສະຣາແອນ ແລະ ນັກໂທດຊາວປາແລັດສະຕິນ ໄດ້ມີຂຶ້ນເປັນຄັ້ງທີ 2 ຕາມຂໍ້ຕົກລົງຢຸດຍິງໄລຍະທຳອິດ, ຊຶ່ງນັກໂທດ ຊາວປາແລັດຕິນ ຈະຖືກສົ່ງໄປເຂດກາຊາ ແລະ ປະເທດຕ່າງໆ ເປັນຕົ້ນ

ໃນເອຢີບ, ຕວັກກີ, ຕູນີຊີ ແລະ ອານເຊຣີ. ຂະນະທີ່ ລົດນຳສິ່ງເຄື່ອງຊ່ວຍເຫຼືອດ້ານມະນຸດສະທຳ ໄດ້ຖືກສົ່ງເຂົ້າໄປໃນເຂດກາຊາແລ້ວ. ເຖິງຢ່າງໃດກໍຕາມ, ວັນທີ 27/1/2025, ອິດສະຣາແອນ ຍັງສືບຕໍ່ໂຈມຕີເຂດເວັດແບງ ເຮັດໃຫ້ມີຜູ້ເສຍຊີວິດໃນແຕ່ລະວັນ. ສ.ອາເມຣິກາ ຍັງຢືນຢັນຈະໃຫ້ການສະໜັບສະໜູນອິດສະຣາແອນ ພ້ອມທັງຈະຊຸກຍູ້ໃຫ້ມີການປ່ອຍຕົວປະກັນທັງໝົດ ແລະ ຈະສົ່ງອາວຸດ ທີ່ ອິດສະຣາແອນ ສັ່ງຊື້ຈາກ ສ.ອາເມຣິກາ ໃນສະໄໝຂອງລັດຖະບານຂອງທ່ານ ໄບເດັນ ໃຫ້ແກ່ ອິດສະຣາແອນ. ພ້ອມນີ້, ຍັງສະເໜີໃຫ້ຂັບໄລ່ປະຊາຊົນ ປາແລັດສະຕິນ ຫຼາຍລ້ານຄົນອອກຈາກເຂດກາຊາ. ສ່ວນປະທານາທິບໍດີປາແລັດສະຕິນ ແລະ ຜູ້ແທນພິເສດຂອງສະຫະປະຊາຊາດ ກ່າວວ່າ ການປາບປາມປະຊາຊົນ ປາແລັດສະຕິນ ໃນເຂດເວັດແບງ ກຳລັງເພີ່ມທະວີຄວາມຮຸນແຮງຂຶ້ນ ໂດຍບໍ່ມີທ່າທີວ່າຈະຢຸດຕິລົງ.

ວັນທີ 3/1/2025, ຊີຣີ ປະກາດວ່າ ທ່ານ Asaad Hassan al-Shaibani, ລັດຖະມົນຕີຕ່າງປະເທດ ຊີຣີ ໄດ້ຢ້ຽມຢາມ ປະເທດກາຕາ, ເອເມຣັດ ອາຣັບ ແລະ ຊອກດານີ, ອາຣັບບີ ຊາອຸດິດ ເພື່ອເປັນການສະໜັບສະໜູນສະຖຽນລະພາບ, ຄວາມໝັ້ນຄົງ, ການຟື້ນຕົວຂອງເສດຖະກິດ ແລະ ສ້າງການຮ່ວມມືອັນດີ ຕາມແຜນພັດທະນາປະເທດ. ໃນຂະນະທີ່, ອາຣັບບີ ຊາອຸດິດ ໄດ້ສົ່ງຄະນະຜູ້ແທນໄປ ຊີຣີ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືດ້ານມະນຸດສະທຳໃນ ຊີຣີ. ນອກຈາກນັ້ນ, ຊີຣີ ຍັງໄດ້ຕົກລົງຟື້ນຟູຄວາມສະຫງົບ ຕາມເຂດຊາຍແດນ ຮ່ວມກັບ ລີບັງ ພາຍຫລັງທີ່ມີເຫດການປະທະກັນລະຫວ່າງ ທະຫານ ລີບັງ ກັບ ກຸ່ມຕິດອາວຸດ. ໃນຂະນະທີ່ ເອຢີບ ແລະ ຊອກດານີ ຍັງໄດ້ສົ່ງເຮືອບິນ ທີ່ບັນຈຸເຄື່ອງບັນເທົາທຸກໄປໃຫ້ ຊີຣີ. ລັດຖະມົນຕີຕ່າງປະເທດ ເຢຍລະມັນ ແລະ ຝຣັ່ງ ໃນຖານະຕົວແທນຂອງສະຫະພາບເອີຣົບ ກໍໄດ້ເດີນທາງຢ້ຽມຢາມ ຊີຣີ ໂດຍກ່າວວ່າ ຖ້າຫາກ ຊີຣີ ຜ່ານການທົດສອບ, ເອີຣົບກໍຈະເປີດໃນໃຈໃຫ້ມີການພົວພັນທີ່ໃກ້ຊິດກັນຫຼາຍຂຶ້ນ ແລະ ທັງສອງປະເທດ ໄດ້ສະເໜີໃຫ້ການຊ່ວຍເຫຼືອ ຊີຣີ ໃນການຮ່າງລັດຖະທຳມະນູນສະບັບໃໝ່. ພ້ອມນັ້ນ, ເຢຍລະມັນ ຍັງໄດ້ອະນຸມັດງົບປະມານເພື່ອຊ່ວຍເຫຼືອຜູ້ລີ້ໄພ ຊີຣີໃນເຢຍລະມັນ ທີ່ສະໝັກໃຈກັບຄືນ ຊີຣີ. ໃນວັນທີ 4-5/1/2025 ທີ່ນະຄອນຫຼວງ Damascus, ຊີຣີ ຈັດກອງປະຊຸມລະດັບຊາດ ເພື່ອປຶກສາຫາລື ກ່ຽວກັບ ອະນາຄົດຂອງປະເທດ. ໄດ້ເຊີນຜູ້ເຂົ້າຮ່ວມ ປະມານ 1.200 ຄົນ ຈາກພາຍໃນ ແລະ ຕ່າງປະເທດ, ໂດຍມີຕົວແທນມາຈາກແຕ່ລະແຂວງ 70-100 ຄົນ ລວມມີກຸ່ມສັງຄົມຕ່າງໆ, ໄດ້ປຶກສາຫາລື ໃນການຈັດຕັ້ງຄະນະກຳມະການຮ່າງລັດຖະທຳມະນູນ ແລະ ສະເໜີໃຫ້ຈັດຕັ້ງລັດຖະບານໃໝ່ ພາຍໃນ 1 ເດືອນ ໂດຍມີຕົວແທນຈາກກຸ່ມເຍົາວະຊົນ, ແມ່ຍິງ, ນັກບວດ ແລະ ໜ່ວຍງານພາກປະຊາສັງຄົມ. ນອກນັ້ນ, ຍັງອາດຈະມີການ ປະກາດຍຸບກຸ່ມຕິດອາວຸດຕ່າງໆພາຍໃນປະເທດ ລວມທັງກຸ່ມ HTS. ຂະນະທີ່ ລັດຖະບານ ຕວັກກີ ບໍ່ອະນຸຍາດ ໃຫ້ພັກແຮງງານເຄີດ (PKK) ຫຼື ກອງກຳລັງຕິດອາວຸດຂອງຊາວເຄີດ (YPG) ປະຕິບັດການໃນ ຊີຣີ; ສ່ວນອາເມຣິກາ ສະໜັບສະໜູນການເມືອງ ທີ່ນຳໂດຍປະຊາຊົນ ຊີຣີ ເພື່ອປະຊາຊົນ ຊີຣີ, ຊຶ່ງຢຶດໝັ້ນໃນສິດທິມະນຸດ ແລະລັດຖະບານ ທີ່ເປີດກວ້າງ. ສ່ວນ ຈີນ ສະໜັບສະໜູນການແກ້ໄຂຂໍ້ຂັດແຍ່ງ ໂດຍຜ່ານການເຈລະຈາ ແລະ ປຶກສາຫາລື ໃນການປົກປ້ອງອະທິປະໄຕ ແລະ ດິນແດນຂອງແຕ່ລະປະເທດ ໃນຕາເວັນອອກກາງ, ພ້ອມທັງຕໍ່ຕ້ານການແຊກແຊງຈາກພາຍນອກ. ວັນທີ 12/1/2025, ໄດ້ມີການຈັດກອງປະຊຸມລະຫວ່າງລັດຖະມົນຕີຕ່າງປະເທດ ແລະນັກການທູດລະດັບສູງ ຈາກບັນດາປະເທດ ໃນພາກພື້ນຕາເວັນອອກກາງ ແລະ ຕາເວັນຕົກ. ພາຍໃຕ້ການເປັນປະທານຂອງ ອາຣັບບີ ຊາອຸດິດ ເພື່ອປຶກສາຫາລືກ່ຽວກັບການສະໜັບສະໜູນ ຊີຣີ ໂດຍສະເພາະການຍົກເລີກການຂວ້ຳບາດຊີຣີ. ວັນທີ 27/01/2025, ຮັກສາການລັດຖະມົນຕ່າງປະເທດ ຊີຣີ ໄດ້ສະແດງຄວາມຍິນດີຕໍ່ການຕັດສິນໃຈ ຂອງສະຫະພາບເອີຣົບ ໃນການລະງັບການຂວ້ຳບາດດ້ານພະລັງງານ, ການຂົນສົ່ງ ແລະ ການເງິນຂອງ ຊີຣີ ເປັນເວລາ 1 ປີເພື່ອຊ່ວຍປັບປຸງຄຸນນະພາບຊີວິດ ຂອງປະຊາຊົນ ຊີຣີ ແລະ ສະໜັບສະໜູນການຟື້ນຕົວຂອງເສດຖະກິດ ໃນຊີຣີ. ໃນຂະນະທີ່ ນັກຄົ້ນຄວ້າວິໄຈ ແລະ ຕົວແທນພາກອຸດສາຫະກຳ ສະແດງຄວາມເປັນຫ່ວງວ່າ ການເດີນທາງກັບປະເທດ ຂອງຜູ້ລີ້ໄພຊາວຊີຣີ ໃນຕວັກກີ ອາດເຮັດໃຫ້ ຕວັກກີ ຂາດເຂີນແຮງງານໃນປະເທດ ເນື່ອງຈາກແຮງງານຊາວຊີຣີ ກວມເອົາປະມານ 20-25% ຂອງແຮງງານທັງໝົດພາຍໃນ ຕວັກກີ. ນອກນັ້ນ, ເມືອງ Gaziantep, ຊຶ່ງເປັນເມືອງໃຫຍ່ຂອງ ຕວັກກີ ທີ່ຢູ່ໃກ້ກັບຊາຍແດນ ຊີຣີ ຍັງໄດ້ເພິ່ງພາແຮງງານຊາວຊີຣີ ປະມານ 450.000 ຄົນ ມາເປັນເວລາດົນນານ.

ເຖິງແນວໃດກໍຕາມ, ສະຖານະການໃນ ຊີຣີ ຍັງບໍ່ມີຄວາມສະຫງົບ, ວັນທີ 5/1/2025, ໜ່ວຍງານສັງເກດການດ້ານສິດທິມະນຸດໃນ ຊີຣີ ລາຍງານວ່າ ກອງທັບອິດສະຣາແອນ ໄດ້ຂ້າມເຂົ້າໄປໃນຫຼາຍບ້ານ ໃນແຂວງ Quneitra ຂອງຊີຣີ, ໂດຍໄດ້ສ້າງສິ່ງກີດຂວາງ ແລະ ປິດໂຮງຮຽນໃນຊຸມຊົນຢ່າງນ້ອຍ 1 ແຫ່ງ, ພ້ອມທັງຈັບກຸມປະຊາຊົນທີ່ຂັດຂວາງປະຕິບັດການດັ່ງກ່າວ. ໃນຂະນະທີ່ ທາງພາກເໜືອ ຂອງຊີຣີ, ກຸ່ມກອງທັບແຫ່ງຊາດ ຊີຣີ (SNA) ທີ່ໄດ້ຮັບການສະໜັບສະໜູນຈາກ ຕວັກກີ ໄດ້ໂຈມຕີທາງອາກາດໃສ່ກອງກໍາລັງປະຊາທິປະໄຕ ຊີຣີ (SDF) ທີ່ໄດ້ຮັບການສະໜັບສະໜູນຈາກ ອາເມຣິກາ ໃກ້ກັບເຂດ Manbij ທາງພາກຕາເວັນອອກສ່ຽງເໜືອ ຂອງເມືອງ Aleppo, ໂດຍມີເປົ້າໝາຍທໍາລາຍຈຸດຍຸດທະສາດ ຂອງກຸ່ມ SDF ຢູ່ອ້ອມຮອບເຂດ Maskanah ທີ່ຕັ້ງຢູ່ນອກ ເມືອງ Aleppo, ເຮັດໃຫ້ທະຫານຂອງທັງສອງຝ່າຍເສຍຊີວິດຫຼາຍກວ່າ 100 ຄົນ ໃນໄລຍະເວລາ 2 ວັນ.

## II. ການເຄື່ອນໄຫວຂອງການນໍາ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ຄຕພ ສະຫຼຸບການເຄື່ອນໄຫວວຽກງານຕ່າງປະເທດ ປະຈໍາປີ 2024 ແລະ ທິດທາງແຜນການ ປີ 2025




ວັນທີ 10/1/2025, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2024, ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າ ຄຕພ ແລະ ມີຄະນະພັກ-ຄະນະນໍາ, ຄະນະກົມ, ພະນັກງານອາວຸໂສບໍານານ ຕະຫຼອດເຖິງ ພະນັກງານ-ສະມາຊິກພັກທົ່ວ ຄຕພ ເຂົ້າຮ່ວມ. ກອງປະຊຸມ ໄດ້ຮັບຟັງການສະຫຼຸບຕີລາຄາຄືນການປະຕິບັດວຽກງານຂອງ ຄຕພ ໃນປີ 2024 ຜ່ານມາ ແລະ ທິດທາງແຜນການ ປີ 2025. ພ້ອມນີ້, ກໍ່ໄດ້ ຜ່ານມະຕິວ່າດ້ວຍ ການແຕ່ງຕັ້ງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການຄະນະພັກ ຂຶ້ນເປັນຮອງເລຂາຄະນະບໍລິຫານງານພັກ ຄຕພ ແລະ ຜ່ານຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ພະນັກງານ ອອກພັກຜ່ອນ-ຮັບອຸດໜູນບໍານານ 2 ສະຫາຍ ເລື່ອນຕໍາແໜ່ງບໍລິຫານຂັ້ນກົມ 1 ສະຫາຍ, ຂັ້ນຫົວໜ້າພະແນກ 6 ສະຫາຍ ແລະ ຮອງຫົວໜ້າພະແນກ 4 ສະຫາຍ; ພ້ອມທັງຍ້ອງຍໍ ພະນັກງານພາຍໃນ ຄຕພ ຜູ້ມີຜົນງານດີເດັ່ນ. ໃນໂອກາດນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ໃຫ້ກຽດໂອ້ລົມ ຊີ້ງສະຫາຍ ໄດ້ມີຄໍາເຫັນ ຊີ້ນໍາໃຫ້ພະນັກງານ-ສະມາຊິກພັກ ຂອງ ຄຕພ ສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງ ອົງຄະນະພັກ ຄຕພ, ແຜນພັດທະນາ ຄຕພ ແຕ່ປີ 2021-2025, ສອງວາລະແຫ່ງຊາດ, ຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ໂດຍຍຶດໝັ້ນແນວທາງການຕ່າງປະເທດ “ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ແລະ ປະຕິບັດນະໂຍບາຍເປີດກວ້າງການພົວພັນຮ່ວມມື ແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບ ຕາມທິດນໍາ ເພີ່ມມິດຫຼຸດຜ່ອນສັດຕູ” ແລະ ປະຕິບັດຕາມຄໍາຂວັນ ຂອງກອງປະຊຸມວຽກງານການຕ່າງປະເທດ ຄັ້ງທີ 14 ຄື: ການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອປົກປັກຮັກສາ ແລະ ພັດທະນາປະເທດຊາດ, ກໍຄື ປະຕິບັດຄໍາຂວັນ ຂອງ ຄຕພ “ຄິດເລິກ ເບິ່ງໄກ ໄປຖືກ”

**2) ຮັກສາການ ຫົວໜ້າ ຄຕພ ເຂົ້າອວຍພອນ ຄະນະນຳກະຊວງປ້ອງກັນປະເທດ**



ວັນທີ 16/1/2025, ທີ່ ຫ້ອງວ່າການກະຊວງປ້ອງກັນປະເທດ, ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ນຳໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ ຮັກສາການຫົວ ໜ້າຄະນະພົວພັນຕ່າງປະເທດ ສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນຄະນະນຳ ກະຊວງປ້ອງກັນປະເທດ ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ, ໂດຍໃຫ້ກຽດຕ້ອນຮັບຂອງ ສະຫາຍ ພົນຕີ ວົງສອນ ອິນປານພົມ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ພ້ອມດ້ວຍຄະນະ. ໂອກາດນີ້, ສະຫາຍ ພົນຕີ ວົງສອນ ອິນປານພົມ ກໍໄດ້ກ່າວສະແດງຄວາມຂອບໃຈ ມາຍັງຄະນະນຳ ຄຕພ ທີ່ໄດ້ນຳເອົາກະຕ່າດອກໄມ້, ກະຕ່າຂອງຂວັນ ແລະ ຄຳອວຍພອນອັນປະເສີດມາສູ່ ຄະນະນຳກະຊວງປ້ອງກັນປະເທດໃນຄັ້ງນີ້. ພ້ອມທັງ ອວຍພອນ ຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກໃນຊີວິດສ່ວນຕົວ ແລະ ຄອບຄົວພ້ອມກັນເຮັດສຳເລັດໜ້າທີ່ການເມືອງ ທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້.

**3) ສະຫາຍຮັກສາການ ຫົວໜ້າ ຄຕພ ເຂົ້າອວຍພອນ ເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ**



ວັນທີ 21/1/2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນ ສະຫາຍ ເອກອັກຄະລັດຖະທູດ ຫງວຽນມິງເຕິມ ແລະ ພະນັກງານສະຖານທູດແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ. ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 95 ປີ (3/2/1930-3/2/2025) ແລະ ບຸນປີໃໝ່ຫວຽດນາມ, ໃນໂອກາດນີ້, ສອງຝ່າຍໄດ້ຕີລາຄາສູງການພົວພັນສອງພັກສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ພ້ອມກັນນີ້, ກໍ່ໄດ້ຊົມເຊີຍຕໍ່ການພັດທະນາປະເທດຊາດຂອງກັນ ແລະ ກັນ. ສອງຝ່າຍ ຍິນດີສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນ ໃນການຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງ ຂອງການນຳຂັ້ນສູງສອງພັກ, ສອງລັດ ລາວ-ຫວຽດນາມ ໃຫ້ບັນລຸຜົນຕາມຄາດໝາຍ, ມີປະສິດທິຜົນສູງ ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

4) ກອງປະຊຸມໃຫຍ່ ສະມາຊິກກຳມະບານ ຄຕພ ຄັ້ງທີ II



ວັນທີ 31/1/2025, ສະຫະພັນກຳມະບານ ຄຕພ ໄດ້ເປີດກອງປະຊຸມໃຫຍ່ ຄັ້ງທີ II ຂອງຕົນ ພາຍໃຕ້ການເປັນປະທານຂອງ ສະຫາຍ ເກີລໍ ຢ່າງກໍ່, ກຳມະການ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານ ຄຕພ ແລະ ໃຫ້ກຽດເຂົ້າຮ່ວມຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າ ຄຕພ ແລະ ສະຫາຍ ວິໄລ ວົງຂະເສີມ, ຮອງປະທານ ສູນກາງສະຫະພັນກຳມະບານລາວ. ພ້ອມນັ້ນ, ຍັງມີຄະນະພັກ, ບັນດາສະຫາຍຕາງໜ້າອົງການຈັດຕັ້ງແມ່ຍິງ ແລະ ຊາວໜຸ່ມ ຄຕພ, ມີຜູ້ຕາງໜ້າຈາກອົງການກຳມະບານອ້ອມຂ້າງຫຼັກ 6 ແລະ ກະຊວງການຕ່າງປະເທດ, ພ້ອມດ້ວຍ ສະມາຊິກກຳມະບານພາຍໃນ ຄຕພ ເຂົ້າຮ່ວມ. ກອງປະຊຸມໄດ້ ຜ່ານບົດລາຍງານການເມືອງ, ບົດສຳຫຼວດການນຳພາ ຂອງຄະນະບໍລິຫານງານຊຸດເກົ່າ. ກອງປະຊຸມໃຫຍ່ ຍັງໄດ້ຈັດພິທີມອບທຸງໄຊກຳມະບານ 5 ເປັນເຈົ້າ, ເປີດປ້າຍກຽດຕິຍົດ ແລະ ປະດັບຫຼຽນກາ ໃຫ້ແກ່ສະຫະພັນກຳມະບານ ຄຕພ. ພ້ອມນີ້ຜູ້ແທນກອງປະຊຸມ ຍັງໄດ້ປ່ອນບັດເລືອກຕັ້ງເອົາ ຄະນະບໍລິຫານງານກຳມະບານ ຄຕພ ຊຸດໃໝ່ ຈຳນວນ 9 ສະຫາຍ, ຍິງ 1 ສະຫາຍ. ກອງປະຊຸມຄັ້ງປະຖົມມະລຶກ ຂອງ ຄະນະຂອງຄະນະບໍລິຫານງານກຳມະບານ ຄຕພ ໄດ້ຕົກລົງ ເລືອກເອົາ ສະຫາຍ ຈັນທະພອນ ຄຳມະນີຈັນ, ເປັນປະທານສະຫະພັນກຳມະບານ ຄຕພ; ສະຫາຍ ທອງດິມ ອິນທະພິນ, ເປັນຮອງປະທານ (ຜູ້ທີ 1), ທັງເປັນປະທານກວດກາ ສະຫາຍ ສົງຫານະຄອນ ສີຫາລາດ ເປັນຮອງປະທານ (ຜູ້ທີ 2) ແລະ ສະຫາຍ ນາງ ຂັນທະວັນ ແກ້ວມະນີວັນ, ເປັນຮອງປະທານກວດກາ. ຈາກນັ້ນ, ໄດ້ຮັບຟັງການໂອ້ລົມຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ ແລະ ສະຫາຍ ວິໄລ ວົງຂະເສີມ ເພີ່ມຕື່ມ ເພື່ອເປັນທິດຊີ້ນຳໃນການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານກຳມະບານ ຄຕພ ໃນຕໍ່ໜ້າ.

5) ຄຕພ ຈັດຝຶກອົບຮົມວຽກງານການຂ່າວ ໃຫ້ພະນັກງານວິຊາການ



ວັນທີ 6-8/01/2025, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດຊຸດຝຶກອົບຮົມວຽກງານການຂ່າວ ໂດຍ ແມ່ນ ສະຫາຍ ທອງດິມ ອິນທະພິນ, ຮອງຫົວໜ້າກົມຄົ້ນຄວ້າ ແລະ ພົວພັນຫຼາຍຝ່າຍ ກ່າວເປີດຊຸດຝຶກອົບຮົມດັ່ງກ່າວ ແລະ ມີວິທະຍາກອນ 2 ສະຫາຍ ຈາກສະຖານີໂທລະພາບແຫ່ງຊາດລາວ ແລະ ສຳມະນາກອນ 25 ສະຫາຍ ທີ່ມາຈາກບັນດາກົມຂອງ ຄຕພ. ການຝຶກອົບຮົມຄັ້ງນີ້ ເພື່ອເປັນການຍົກລະດັບຄວາມເຂົ້າໃຈ ກ່ຽວກັບວຽກງານການຂ່າວ ໃຫ້ແຕ່ລະພາກສ່ວນ. ຊຶ່ງ ສຳມະນາກອນ ໄດ້ຮຽນຮູ້ ການຂຽນຂ່າວ, ອອກຂ່າວ, ການຖ່າຍພາບການປັບແຕ່ງຮູບພາບ, ການບັນທຶກວິດີໂອ, ການຕັດຕໍ່ວິດີໂອ. ພາຍຫຼັງສຳເລັດຊຸດຝຶກອົບຮົມ ຍັງມີພິທີການມອບໃບຢັ້ງຢືນ ໃຫ້ບັນດາ ສຳມະນາກອນ ຊຶ່ງໃຫ້ກຽດມອບໂດຍ ສະຫາຍ ບຸນຍະເດດ ໄຊຍະວົງ, ກຳມະການຄະນະພັກ, ຫົວໜ້າຫ້ອງການ ຄະນະພົວພັນຕ່າງປະເທດສູນກາງພັກ.